## ກາຣເມືອງສ່ວນປະຊາຊົນ

ຫລາຍຄົນບໍ່ເຊື່ອວ່າ ປະຊາຊົນລາວບໍ່ຮູ້ກາຣເມືອງ ແຕ່ຕິດຕາມກາຣເຄື່ອນໄຫວແລະຊໍ້າຮຽກຮ້ອງຂອງປະຊາຊົນລາວ ໃນຂໍ້ທີ່ຮຽກຮ້ອງນັ້ນແມ່ນ ໃຫ້ຣັຖບາລຄືນອຳນາຈ ໃຫ້ປະຊາຊົນຕໍ່ມາກໍ່ຮຽກຮ້ອງ ໃຫ້ນາຍົກລາວຄອມມູນິສ ທີ່ມາຈາກປະຊາຊົນສ່ວນໃຫ່ຍ ໃຫ້ລາອອກ ແທນທີ່ພວກເຮົາຈະຮຽກຮ້ອງ ໃຫ້ຍຸບສະພາເພື່ອຄືນອຳນາດ ໃຫ້ປະຊາຊົນສແດງ ໃຫ້ເຫັນວ່າ ສຽງປະຊາຊົນແລະແນວຮ່ວມມີອຳນາດຫລາຍກວ່າສຽງຂອງພັກແລະລັດຢ່າງນັ້ນບໍ່ ຣັຖທັມມະນູນທີ່ກຳໜົດ ໃຫ້ປະຊາຊົນມີສິດທິເທົ້າທຽມກັນ ຄື ໜຶ່ງຄົນໜຶ່ງສຽງແລະຣະເມີດຕໍ່ສັກສີຄວາມເປັນມະນຸດ ກຸ່ມເຄື່ອນໄຫວບັງອາດອ້າງຕົນທີ່ມີຄວາມຄິດຄວາມເຫັນເໜືອກວ່ານັກກາຣເມືອງໂດຽທົ່ວໄປກາຣກະທຳຂອງຂະບວນກາຣ ໃນຖານະເປັນແກ່ນນຳ ຄືວ່າບໍ່ເຂົ້າໃຈຫລັກກາຣພື້ນຖານຂອງຣະບອບປະຊາທິປະໄຕ ທີ່ຕ້ອງເຄົາຣົບ ໃນສັກສີຂອງຄວາມເປັນມະນຸດ ຕອນແລກມາຟັງຂະບວນກາຣເວົ້າແລະວິຈານເຫດກາຣບ້ານກາຣເມືອງຄິດວ່າມີຄວາມເຂົ້າໃຈຣະບອບກາຣເມືອງ ໃນຣະບອບປະຊາທິປະໄຕແຕ່ເມື່ອເຫັນກາຣກະທຳທີ່ຮຽກຮ້ອງ ໃຫ້ຣັຖບາລລາວຄອມມູນິສ ສົ່ງຄືນອຳນາດ ໃຫ້ປະຊາຊົນ ຈຶ່ງທຳ ໃຫ້ຊາບວ່າບໍ່ມີຄວາມຮູ້ຄວາມເຂົ້າໃຈປະຊາທິປະໄຕຢ່າງແທ້ຈິງ ແລ້ວມີກາຣຊີ້ນຳຜູ້ເຂົ້າຮ່ວມຂະບວນກາຣ ທີ່ປະເທສລາວ ໃຫ້ຕື່ນຄົນທີ່ຕົນເອງເຂົ້າໃຈວ່າເປັນຄົນຂອງຕົງກັນຂ້າມ ແລະພວກເຂົາຍັງຊີ້ນຳຄົນທີ່ໄປກໍ່ກວນປະຊາຊົນລາວຢູ່ຕ່າງແດນ ແຕ່ຣັຖບາລລາວຫລົບຢູ່ຂ້າງຫລັງລວມທັງບຸກ ໃຫ້ ໂຄສະນາວ່າປະເທສລາວເປີດກວ້າງແລ້ວແລະມີປະຊາທິປະໄຕສ່ວນປະຊາທິປະໄຕນັ້ນ ເຂົາບໍ່ທຳກັນແບບນີ້ ກາຣກະທຳຢ່າງນີ້ບໍ່ໃຊ້ນິໃສຂອງຄົນທີ່ເຂົ້າໃຈກາຣເມືອງ ໃນຣະບອບປະຊາທິປະໄຕແລະຍິ່ງໄປກວ່ານັ້ນເຂົາຍັງມາຊັກຊວນ ຜູ້ທີ່ເຄີຽລົ້ມເຫລວທາງກາຣເມືອງບໍ່ວ່າຈະເປັນຂະບວນກາຣລາວແດງຫລືລາວອິສຣະ ພວກຄອມມູນິສຍັງທຳ ໃຫ້ສັງຄົມລາວຂາດຄວາມເຊື່ອຖື ໄປອີກວ່າເປັນຂະບວນກາຣທີ່ຕ້ອງກາລົ້ມຣັຖບາລທີ່ຈິງແລ້ວແມ່ນຣັຖບາລລາວຄອມມູນິສແບ່ງແຍກປະ

ຊາຊົນລາວອອກຈາກກັນ ເຊັ່ນເວົ້າວ່າລາວຕ່າງຊາດຫຼືເວົ້າວ່າລາວປະຕິການແຕ່ທີ່ຈິງແລ້ວຖ້າຣັຖບາລລາວປັດຈຸບັນນີ້ຖ້າເຂົ້າໃນການເມືອງບໍ່ຄວນເວົ້າວ່າດັ່ງທີ່ກ່າວມານີ້ເຮົານີ້ມີປີ ໃສ່ໜ້າກາກທີ່ສວມໃສ່ຕາມບໍ່ທັນໂລກກາພິວັດແລ້ວ ຈະເປັນຜູ້ນຳປະເທສໄດ້ຈັ່ງໃດຢ່າງໃດ ກໍ່ດີຖ້າມີຄວາມເຂົ້າໃຈເບື້ອໃນຂອງການປົກຄອງ ໃນຣະບອບປະຊາທິປະໄຕຢ່າງແທ້ຈິງທາງທີ່ ດີລາວຄອມມູນິສຄວນໃຫ້ໃຊ້ຄົບນະໂຍບາຍໃນໂຄງການ ການເມືອງ-໑໗-ຂໍ້ນັ້ນ ຕາມທີ່ສະມາ ຊິກສະພາຕັ້ງຣັຖທັມມູນທີ່ກຳໜົດໄວ້ນັ້ນໃນໂຄງການ ກາບເມືອງ-໑໗-ນັ້ນ ເພາະວ່າຣະບອບປະຊາທິປະໄຕນັ້ນເປັນການສູ້ກັນດ້ວຍຄວາມຄິດແລະເຫດຜົນບໍ່ໃຊ້ໂດຍການໃຊ້ກຳລັງບໍ່ວ່າຈະເປັນໃນຮູບແບບໃດ ຄົນໃນສັງຄົມໃນຣະບອບປະຊາທິປະໄຕ ຕ້ອງມີຄວາມອົດທົນຢ່າງນ້ອຍໃຫ້ຖືກຕ້ອງຕາມໂຄງການ ການເມືອງ-໑໗-ທີ່ໄດ້ພາກັນຕົກລົງມານັ້ນ ຖ້າປ່ຽນແປງຜູ້ໄດ້ຕ້ອງຍອມຮັບການຜິດພາດໃນການເລືອກຂອງຕົນເອງບໍ່ໃຊ້ໃນຄວາມບໍ່ພໍໃຈແລະບໍ່ຕ້ອງຢູ່ຄົບວາລະກຳໜົດຕາມໂຄງການທີ່ວາງໄວ້ນັ້ນ ແຕ່ລາວແດງຄອມມູນິສກໍ່ຍັງໃຊ້ກຳລັງຮົບລ້າງກັນຢູ່ຕຣອດມາເຊັ່ນ ຂ້າທ່ານອຸດົມຂັນຕິຍະ ສີຊະນະສີສານນາງພົລສຸດໃຈທຳມະສິດແລະສໍ ໆໄປຕາມນັ້ນພຶດຕິກຳເຊັ່ນນີ້ໃນສັງຄົມປະຊາທິປະໄຕປະເທສທີ່ຈະເຣີນມານັ້ນເຂົາເຈົ້າບໍ່ໃຊ້ ກັນແບບນີ້ແລະທີ່ຮົບບໍ່ໄດ້ນັ້ນກໍ່ຄືກຸ່ມຄົນທີ່ເປັນຣັຖບາລເວົ້າວ່າຄົນບໍ່ຫວັງດີຄົນລາວຕ່າງແດນແຕ່ຄົນລາວດັ່ງກ່າວນີ້ແລ້ວເປັນຄົນເລືອກຂບວນການຫຼືຂບວນການແນວລາວມາແຕ່ຕົ້ນ ແຕ່ໃນການສຳນຶກຂອງຄົນເລົ່ານີ້ ບໍ່ຍອມຮັບມະຕິທີ່ຕົນຕົກລົງໃນການຕັ້ງສານປະຊາຊົນຂຶ້ນນັ້ນວ່າໃຫ້ປະຊາຊົນລາວມີສິດທິປະຊາທິປະໄຕມີສິດທິໃນການປາກເວົ້າມີສິດທິໃນການຊຸມນຸມມີສິດທິໃນການຕັ້ງກຸ່ມການເມືອງ ແຕ່ຕໍ່ມາພວກລາວແດງບໍ່ຍອມປະຕິບັດສຽງສ່ວນຫລາຍ ຈຶ່ງສະທ້ອນເຖິງຄວາມສຳນຶກເປັນຂອງຕົນທີ່ເວົ້າວ່າປະຊາທິປະໄຕເປັນພື້ນຖານສ້າງຊາດໃຫ້ຈະເຣີນກ້າວໜ້າ ແຕ່ສຸດທ້າຍມາ

ມັນເປັນຣາຊາທິປະໄຕໃນຣະບອບ

ຜເດັດການຄອມມຸນິສວຽດນາມ ໃນການວິພາກວິຈານຢ່າງສງ່າຜາເຜີຍແລະ ໃຊ້ວິທີການແບບສັນຕິ ເປັນສິດທິອັນຊອບທັມຂອງບຸກຄົນຕາມລະບອບປະຊາທິປະໄຕ ອັນນີ້ແລ້ວເປັນສິ່ງທີ່ສັງຄົມຕ້ອງການບໍ່ ໃຊ້ຢ່າງທີ່ຄອມມຸນິສກະທຳຢູ່ໃນຄະນະນີ້ ອັນນີ້ພວກເຮົາຕ້ອງໃຊ້ຄຳກ່າວຫາລົ້ມຣັຖບາລໄດ້ແທ້ ສຳກັບເປັນການທີ່ມີສຽງສ່ວນນ້ອຍລົ້ມຣັຖບາລສຽງສ່ວນໃຫຍ່ໄດ້ ນາຍົກລາວຄອມມຸນິສວຽດນາມ ຕ້ອງໃຫ້ພາກັນໄປທົບທວນຄວາມຄິດຂອງຕົນທີ່ ແອບອ້າງໜັກອ້າງໜາວ່າ ປະຊາຊົນພ້ອມພຽງໃນໂຄງຫານ ການເມືອງ-໑໘-ຂໍ້ນັ້ນ ຈົ່ນວ່າໄດ້ຕັ້ງສານປະຊາຊົນຂຶ້ນມາແລະໄດ້ເວົ້າວ່າຕົນມີສະເຖັຽຣະພາບແຕ່ສຸດທ້າຍບໍ່ໃຊ້ໂຄງການດັ່ງກ່າວສຳເຣັດໄດ້ສ່ວນປະຊາທິປະໄຕ ເປັນຄຳທີ່ຜູ້ຄົນໃນສັງຄົມບໍ່ວ່າຈະຢູ່ໃນອາຊີບໃດຊອບເວົ້າວ່າກັນ ແຕ່ຈະເຂົ້າໃຈໃນຄວາມເປັນປະຊາທິປະໄຕເຊິ່ງທັງເນື້ອຫາແລະຮູບແບບຫຣືບໍ່ ອັນນີ້ລາວຄອມມຸນິສວຽດນາມບໍ່ຄ່ອຍຈະແນ່ໃຈ ເພາະປະຊາທິປະໄຕຂອງພັກຣັຖເປັນເນື້ອຢາຝິ່ນ ທີ່ແຕ່ລະຄົນອ້າງເພື່ອຄຸ້ມຄອງສິດທິເສຣີພາ ໃນການກະທຳຂອງຕົນເອງ ຖ້າເຮົາເຂົ້າໃຈໃນຄວາມເປັນປະຊາທິປະໄຕທັງເນື້ອຫາແລະຮູບແບບແລ້ວ ຈະທຳໃຫ້ສາມາດແຍກພຶດຕິກັມຂອງຜູ້ທີ່ເຄື້ອນໄຫວທາງການເມືອງໄດ້ເປັນຢ່າງດີ ວ່າທີ່ເຂົາເຈົ້າດຳເນີນການໄປນັ້ນ ມີວັດຖຸປະສົງເພື່ອປະຊາທິປະໄຕຫຣືບໍ່ ແລະຊາບໄດ້ຈັງໃດ [ຜູ້ຂຽນຂໍອະທິບາຍຫຣືຄວາມໝາຍຂອງລະບອບປະຊາທິປະໄຕ ຕ້ອງໃຫ້ສັງເກດ ດັ່ງນີ້ຄືຫລັກການປົກຄອງໃນລະບອບປະຊາທິປະໄຕ ທີ່ເປັນສາກົນແລະເພິ່ນໃຊ້ກັນທົ່ວໂລກ ໝາຍເຖິງການປົກຄອງຂອງປະຊາຊົນ ໂດຍປະຊາຊົນແລະເພື່ອປະຊາຊົນ-ເປັນສັດຈະວາຈາຂອງອະດີດປະທານາທິບໍດີຂອງສະຫະຣັດ ອັບຣາຮັມລິນຄອນນັ້ນ ໝາຍເຖິງຫລັກການປົກຄອງຣະ ບອບປະຊາທິປະໄຕ ທີ່ປະຊາຊົນລາວຕ້ອງການແຕ່ຕ້ອງເຂົ້າໃຈໃນຫລັກການປົກຄອງດັ່ງກ່າວນັ້ນອີກດ້ວຍ ແຕ່ໃນປະເທສຕ່າງ ໆ ທີ່ໄດ້ນຳເອົາໄປໃຊ້ນັ້ນມີຣະດັບຄວາມເຂັ້ມແຂງຂອງຄວາມເປັນ

ປະຊາທິປະໄຕຕ່າງກັນໄປ ເຊັ່ນປະເທສສະຫະຣັຖອະເມຣິກາ ອັງກິດ ຢີ່ປຸ່ນ ແລະປະເທສ
ທີ່ຈະເຣີນມາແລ້ວ ຖືວ່າມີຄວາມເປັນປະຊາທິປະໄຕ ແຕ່ເນື້ອຫາຂອງຄວາມເປັນປະຊາ
ທິປະ ໄຕນັ້ນ ຢູ່ທີ່ຈຸດມຸ້ງໝາຍຂອງການໃຊ້ອຳນາດຣັຖເພື່ອປະໂຍດໃນຄວາມສົງບສຸກ
ຂອງປະຊາຊົນແລະປະເທສຊາຕເປັນຫລັກແລະເປັນຮູບແບບທີ່ຈະເຂົ້າສູ່ອຳນາດສ່ວນໃນ
ອຳນາດຕ້ອງໃຫ້ປະຊາຊົນເລືອກຕົວແທນທີ່ມີຫລາຍກວ່າໜຶ່ງທາງເລືອກໂດຍໃນການເລືອກ
ນັ້ນຕ້ອງມີຄວາມອິສຣະໃນການຕັດສິນໃຈຂອງບຸກຄົນແຕ່ເມື່ອເລືອກແລ້ວແມ່ນຈະໄດ້ນັກ
ການເມືອງພຽງໜຶ່ງພັກການເມືອງ ເຊັ່ນປະເທສຂເມນປະເທສລາວໃນປະຈຸບັນ ກໍ່ຖືວ່າເປັນ
ປະຊາທິປະໄຕຈອມປອມ ແລະອາດຖືວ່າເປັນປະຊາທິປະໄຕຫລາຍກວ່າ ປະເທສໃກ້ຄຽງ
ເສັຽດ້ວຍຊ້ຳ ເພາະຣັຖບາລຄອມມູນິສລາວດຳເນີນນະໂຍບາຍເພື່ອປະໂຍດສ່ວນຕົວໃນ
ເນື້ອຫາປະຊາທິປະໄຕຢ່າງແທ້ຈິງນັ້ນ ສ່ວນຮູບແບບເຊັ່ນການມີຣັຖທັມນູນໃນການມີການ
ເລືອກຕັ້ງເສຣີມີກົດໝາຍບໍ່ໃຊ້ ຈະບົ່ງບອກເຖິງຄວາມເປັນປະຊາທິປະໄຕສເມີໄປ ໝາຍ
ຄວາມວ່າ ແມ່ນຈະມີຣັຖທັມນູນ ມີກົດໝາຍ ມີການເລືອກຕັ້ງຫາກໃນການເລືອກຕັ້ງນັ້ນ
ບໍ່ມີອິສຣະໃນການຕັດສິນໃຈເລືອກ ກໍ່ບໍ່ຖືວ່າເປັນການປົກຄອງໃນຣະບອບປະຊາທິປະໄຕ
ເຊັ່ນຈີນ ວຽດນາມແລະລາວປະຈຸບັນນີ້ ວ່າມີຣັຖທັມນູນ ມີການເລືອກຕັ້ງແຕ່ບໍ່ຖືວ່າເປັນ
ປະຊາທິປະໄຕໄດ້ ຕາມໃນຄວາມໝາຍຂອງພວກເຮົາແລະຊາວໂລກຕະວັນຕົກ ສ່ວນການ
ປົກຄອງພາຍໃຕ້ຣະບອບປະຊາທິປະໄຕແມ່ນບໍ່ໃຊ້ເປັນຣະບອບທີ່ດີທີ່ສຸດ ແຕ່ກໍ່ເປັນການ
ປົກ ຄອງທີ່ນ້ອຍທີ່ສຸດ ເມື່ອປຽບທຽບກັບການປົກຄອງແບບຜະເດັດການຫຣືແບບລາຊາ
ທິປະໄຕຕາມທີ່ກົດການເມືອງໂບຮານກ່າວໄວ້ ຜູ້ທີ່ອອກແບບການໃຊ້ອຳນາດໃນຣະບອບ
ປະຊາທິປະໄຕເປັນທີ່ຍອມຮັບກັນ ໃນວົງການບໍຣິຫານບ້ານເມືອງ ການເມືອງ
ຝຣັ່ງເສສ ທີ່ມີຢູ່ໃນປະເທສລາວຍັງມີການແບ່ງການໃຊ້ອຳນາດອະທິປະໄຕຂອງ
ຣັຖບາລ ເປັນສາມອຳນາດ ໄດ້ແກ່ອຳນາດ

ນິຕິບັນຍັດຊຶ່ງເປັນອຳນາດໃນການຕຣາກົດໝາຍ ຣັຖສະພາເປັນຜູ້ໃຊ້ອຳນາດນີ້
ອຳນາດບໍຣິຫານ ຣັຖບາລ ໂດຍຄະນະຣັຖມົນຕຣີເປັນຜູ້ໃຊ້ອຳນາດນີ້ ການແບ່ງການໃຊ້ອຳ
ນາດຣັຖທັງສາມນີ້ ເພື່ອເປັນການຕຣວດສອບຖ່ວງດຸນອຳນາດຊຶ່ງກັນແລະກັນການທີ່ຕ້ອງການ
ໃຫ້ອຳນາດທັງສາມຖ່ວງດຸນກັນ ເພາະບໍ່ເຊື່ອວ່າ ເມື່ອຜູ້ນຳເຂົ້າສູ່ອຳນາດຣັຖແລະການໃຊ້
ອຳນາດຣັຖແລ້ວ ຈະບໍ່ສໍ້ລົບ ຄໍຣັບຊັ້ນ ຄຳກ່າວທີ່ວ່າຍິ່ງມີອຳນາດຫລາຍ ຍິ່ງສໍ້ລົບເບັດເສັດ
ດັ່ງນັ້ນຈຶ່ງຕ້ອງການສ້າງອຳນາດເພື່ອການສໍ້ລົບແລະທຸຈຣິດ ຂອງຜູ້ມີອຳນາດຢ່າງໃດກໍ່ດີ ເພື່ອ
ໃຫ້ເຂົ້າໃຈຄວາມໝາຍຂອງຄຳວ່າ ການສໍ້ລົບແລະທຸຈຣິດ ການທຸຈຣິດຈະສັງເກດ ແລະ
ສັມຜັດໄດ້ງ່າຍຖ້າພິຈາຣະນາໃນກົດໝາຍ-ໝາຍເຖິງການສແວງຫາຜົນປະໂຍດໂດຍບໍ່ຊອບ
ການສໍ້ລົບນອກກົດໝາຍເຖິງການທຸຈຣິດແລ້ວຍັງໝາຍເຖິງການວາງກົດກະຕິກາ ການບຽງບັງ
ຫລືສແວງຫາປະໂຍດຈາກຕຳແໜ່ງໜ້າທີ່ -ທີ່ເປັນນາມປະທັມຫລື ຣູບທັມເຊັ່ນການເອົາເວລາ
ສ່ວນລວມໄປທຳປະໂຍດໃຫ້ຕົນເອງການເອົາຍົດປະຈຳຕຳແໜ່ງໄປໃຫ້ຄອບຄົວໃຊ້ເປັນຕົ້ນ
ໃນວົງການ ການເມືອງລາວແລະວົງຣາຊການລາວຄອມມູນິສ ສໍ້ລົບກັນຢູ່ຫລາຍສ່ວນ
ເຄື່ອງມືທີ່ຈະປາບປາມການສໍ້ລົບໄດ້ຢ່າງມີປະສິດທິພາບຄືຄຸນທັມ ຈະຣິຍະທັມແລະສຳ
ນຶກຂອງຄວາມຮັກຊາຕຮັກແຜ່ນດິນທໍ່ນັ້ນ ກົດໝາຍຫລືການເມືອງຂອງລາວແດງແລະຂອງແນວ
ລາວຮັກຊາຕຢ່າງດຽວ ບໍ່ອາດຈະແກ້ໄຂບັນຫາການສໍ້ລົບທຸຈຣິດໃນເຊີງປ້ອງກັນບໍ່ໄດ້ດອກ
ການຮັບຮູ້ກັບສໍ້ລົບຂອງຄົນທົ່ວໄປໝາຍເຖິງ ໃຊ້ອຸບາຍດອກລວງ ໂດຍກ່າວຄຳດອກລວງ
ເພື່ອໃຫ້ຫລົງຜິດເປັນຄວາມໝາຍຕາມພົຈນານຸກົມ ຊຶ່ງເປັນຄວາມໝາຍທີ່ແຄບ ອາຈໃຊ້
ກັບການເມືອງແລະການບໍຣິຫານບໍ່ໄດ້ ເຊັ່ນຜູ້ບໍຣິຫານວາງກົດໝາຍເອື້ອປະໂຍດໃຫ້ຕົນເອງ
ເຊັ່ນປະເທສຍາກຈົນຢູ່ ແຕ່ເມື່ອໄດ້ອຳນາດແລ້ວ ກໍ່ສ້າງໂຄງການໂຄສະນາວ່າປະເທສຂອງ
ຕົນເປີດກວ້າງແລ້ວອັນນີ້ແລ້ວແມ່ນການກ່ຽວຂ້ອງກັບທຸຣະກິດສ່ວນຕົວ ຫລືວາງເຄືອ
ຄ່າຍ ຕາມ ເກນປະຊາຊົນທີ່ຢູ່ນອກປະເທສ ໃຫ້ສູນຫາຍໄປແລະກໍ່ສ້າງ ນະໂຍບາຍເພື່ອ

ເປີດກວ້າງເອົາຄົນວຽດນາມເຂົ້າປະເທສຢ່າງບໍ່ມີຄວາມຜິດ ຖ້າແມ່ນ ປະຊາຊົນລາວທີ່ຢູ່ຕ່າງແດນ ເຂົາຖືວ່າບໍ່ເປັນຄົນລາວໄປແລ້ວພວກເຂົາຖືເອົາແຕ່ເງິນທີ່ນັ້ນ ໃນສ່ວນການເບິ້ງລຽ້ງສູກກວ່າທີ່ຄວນຈະເປັນ ເຊັ່ນເປັນຂອງຂ້າຣາຊການຫຣື ເຈົ້າໜ້າທີ່ ຂອງພັກຣັຖ ແຕ່ພວກເຂົານັ້ນໄປມາໃສກໍ່ສະດວກພາງ ໃນປະເທສ ຫຣືການສ້າງໂຄງການບັງໜ້າ ເຊັ່ນເຂດວັດພູກໍ່ປະກາດວ່າຈົບງາມແຕ່ວ່າສາລາໜອງສານັ້ນກໍ່ຍັງບໍ່ພາກັນສ້າງເລີຽ-ອັນນີ້ມັນເປັນການໜູນຫລັງຂອງວຽດນາມເພື່ອເຂົາທຳໃຫ້ປະເທສຊາຕຂອງເຮົາຂາດທຶນ ໃນການທ້ອງທ່ຽວຂອງຊາວຕ່າງປະເທສ ພຶດຕິກັມດັ່ງກ່າວນີ້ ທຳໃຫ້ປະເທສຊາຕເສັຽຫາຽ ຈາກແນວຄິດດັ່ງກ່າວນີ້ ແມ່ນຈະມີການທວງອຳນາດກັນກໍ່ບໍ່ໄດ້ ໝາຽຄວາວ່າຈະບໍ່ມີການສໍ້ສົນທຸຈຣິດ ເພາະການນຳໄປໃຊ້ຍັງມີຢູ່ຫລາຽ ມາດຕະຖານຕາມສະພາສັງຄົມ ກ່າວຄືຖ້າເປັນການບໍຣິຫານປະເທສໃນຮູບແບບປະທານາທິບໍດີເຊັ່ນສະຫະຣັຖອາເມຣິກາອຳນາດທັງສາມຈະມີອິສຣະຕໍ່ກັນຄ່ອນຂ້າງຫລາຽ ແຕ່ຖ້າເປັນຮູບແບບຣັຖສະພາ ຍັງຍ່ອມໃຫ້ມີຄວາມກ່ຽວພັນຣະຫວ່າງອຳນາດບໍຣິຫານແລະອຳນາດນິຕິບັນຍັດ ເຊັ່ນປະເທສລາວມີການຍອມໃຫ້ຜູ້ແທນເປັນຝ່າຽບໍຣິຫານໄດ້ ແລະບໍ່ຕ້ອງລາອອກຈາກຜູ້ແທນຊຶ່ງໃນອະດີດເປັນຈັ່ງຊີ້ ແຕ່ຕາມຣັຖທັມນູນສະບັບລາວແດງຄອມມຸນິສ ມີການເພີ້ມອຳນາດທວງດຶງຫລາຽຂຶ້ນກວ່າ ຄືເມື່ອຊ້ວງຫລັງປີ-໑໙໗໕-ນັ້ນປະເທສລາວປົກຄອງໂດຍຣະບອບລາຊາທິປະໄຕ ທີ່ມີພຣະມະຫາກະສັດໃຊ້ອຳນາດອະທິປະໄຕທັງສາມ ເມື່ອລາວຕ້ອງການພັທນາການເມືອງໃນປະເທສໃຫ້ປະຊາຊົນໄດ້ເຂົ້າຣ່ວມ ພຣະບາດສົມເດັດພຣະເຈົ້າສຣີສວ່າງວົງ ຈຶ່ງສະຣະອຳນາດໃຫ້ປະຊາຊົນແລະໃຫ້ປະຊາຊົນປົກຄອງດູແລກັນເອງ ຜ່ານກົນໄກຂອງການປົກຄອງແລະປະຊາທິປະໄຕ ມີສະພາໃຊ້ອຳນາດນິຕິບັນຍັດມີຣັຖບາລໃຊ້ອຳນາດບໍຣິຫານມີສານໃຊ້ອຳນາດຕຸຣາການ-ສະຖາບັນພຣະມະຫາກະສັດ ຈຶ່ງຖືກຍົກຍ້ອງເປັນສະຖາບັນເບື້ອງສູງແລະເປັນສັນຍາລັກຂອງຄວາມເປັນຊາຕແລະດຳລົງປະເພນີຂອງປະເທສທີ່ໃນອະດີດໄດ້ສ້າງຊາຕສ້າງແຜ່ນດິນໄວ້ໃຫ້ລູກໃຫ້ຫລານ

ປວງຊົນຊາວລາວຈຶ່ງຍອມນຳໃຊ້ເບື້ອງສູງໃຫ້ສະຖາບັນພຣະມະຫາກະສັດຢູ່ເໜືອກົດໝາຽຢູ່ເໜືອກາຣເມືອງຕາມຫລັກປະຕິບັດ ທີ່ເປັນສາກົນວ່າອົງພຣະມະຫາກະສັດບໍ່ສາມາດກະທຳຜິດໄດ້ດັ່ງນັ້ນ ກົດໝາຽອາຍາແລະແພ່ງທັງຫລາຽຈະໃຊ້ບັງຄັບ ກັບພຣະມະຫາກະສັດບໍ່ໄດ້ສະດຸບກໍ່ຄືສະຖາບັນພຣະມະຫາກະສັດຈຶ່ງຢູ່ເໜືອກາຣເມືອງກາຣອອກແບບກາຣປົກຄອງແບບປະຊາທິປະໄຕ ຈຶ່ງສອດຄ່ອງກັບຫລັກກາຣປົກຄອງ ທີ່ຍອມຮັບເປັນສາກົນໃນອາດີດແລະໃນການບໍຣິຫານປະເທສທີ່ຊາວໂລກໃຫ້ຄວາມເຊື່ອຖືເຄົາຣົບ ໃນອະທິປະໄຕຂອງລາວກາຣທີ່ຂບວນກາຣຕໍ່ ຕ້ານ ຮຽກຮ້ອງໃຫ້ຣັຖບາລລາວຄອມມຸນິສຄືນອຳນາດໃຫ້ປະຊາຊົນແລ້ວໃຫ້ປະຊາຊົນເຂົ້າມາກ່ຽວຂ້ອງກັບກາຣເມືອງໄດ້ແລະນຳສະຖາບັນ ພຣະມະຫາກະສັດເຂົ້າສູ່ຣະບອບກາຣປົກຄອງແບບປະຊາທິປະໄຕ ໃຫ້ເປັນທີ່ຍອມຮັບຂອງປະຊາຊົນຈຶ່ງຖື ໄດ້ວ່າເປັນການບັບຖືສະຖາບັນກະສັດຂອງລາວໃນອະດີດມານັ້ນ ອັນນີ້ເປັນໜ້າຄິດ ຖ້າຄິດໃນມູມນີ້ເປັນກາຣທີ່ ພັກຣັຖລາວແດງຄອມມຸນິສ ຄວນຈະພິຈາຣະນາແລະເປັນກາຣວິເຄາະກາຣເມືອງ ການ ບໍຣິຫານສ່ວນຣາຊການ ແຕ່ຖ້າຖາມຕໍ່ວ່າ ກາຣສໍ້ສົນພາກຣັຖທີ່ມີກາຣສໍ້ສົນທຸຈຣິດກັບປະຊາຊົນນັ້ນ ອັນນີ້ຈະຕອບບໍ່ຢາກ ສົມຄວນຂຶ້ນກັບກິດຈະກາຣຂອງປະຊາຊົນເພາະລາຽໄດ້ ອອກມາຈາກປະຊາຊົນ ດັ່ງນັ້ນຈຶ່ງ ຕ້ອງໃຫ້ປະຊາຊົນມີສິດທິ ເສຣີພາບ ມີສິດທິເຂົ້າຮ່ວມພັກກາຣເມືອງ ມີສິດທິອອກສຽງທັງຄວາມຄິດຄວາມເຫັນ ເຊັ່ນດຽວກັບກັບນັກກາຣເມືອງ ດັ່ງນັ້ນຈຶ່ງຖືໄດ້ວ່າປະຊາຊົນມີສິດ ປະຊາທິປະໄຕໃຫ້ປະຊາຊົນມີສ່ວນຮ່ວມ ປະເທສລາວຕ້ອງຮູ້ສຶກຄັກແນ່ວ່າ ອະນາຄົບຈະມີກຳລັງຢູ່ ໄດ້ກໍ່ຕ້ອງມີກາຣລວບລວມປະຊາຊົນຂອງປະເທສເຂົ້າກັນ ດັ່ງໃນປວັດສາດຂອງຕົນ ທີ່ເຄີຍມີມາແລ້ວຈຶ່ງຢັ້ງຢືນໄດ້ວ່າໃນຄວາມເປັນອັນນຶ່ງອັນດຽວກັນ
ແລະຄວາມເປັນ

ເອກຣາຊຂອງຕົນຢ່າງສງ່າຜ່າເຜີຍ ປະຊາຊົນລາວຕ້ອງຢັ້ງຢືນດ້ວຍຄວາມຈົ່ງຮັກພັກດີຕໍ່ຊາດ ສາສນາ ພຣະມະຫາກະສັດ ໃນຣະບອບປະຊາທິປະໄຕ-ປະຊາຊົນລາວ ຂໍປະກາດວ່າ ຕົນປະສົງໃຫ້ມີການປົກຄອງ ຕາມຣະບອບປະຊາທິປະໄຕໃນທັມມະ ແລະໃຫ້ມີຣັຖທັມນູນສ່ວນປະຊາຊົນເພື່ອໄດ້ຮັບຮູ້ສິດເສຣີພາບຕໍ່ກົດໝາຍ ມີສິດໄດ້ຮັບຄວາມຄຸ້ມກັນ ໃນການຢູ່ກິນ ມີສິດໃນການວາຈາ ມີສິດໃນການອອກສຽງ ມີສິດໃນການຈັດກຸ່ມກ້ອນ ຊຸມນຸມກັນ ມີສິດໃນການເຊື່ອຖືອື່ນ ໆ ທີ່ຖືກຕ້ອງຕາມກົດໝາຍ

ຈາກສູນກາງ ສັນພູໝອກ

ທີ່ນະຄອນວຽງຈັນ

ໃນນາມລາວອິສຣະ